

ພິມຄັ້ງທີ 2

"ນັກຂຽນດີເດັ່ນລາງວັນນາກຄໍາລາວເອັນເຕີເທັນເມັນ"

" The Best Writer of Golden Naka Awards Lao Entertainment "



# ສູດສໍາເລັດ

## ຜູ້ບໍລິຫານຍຸກ ໃໝ່

**Philosophy Of Success To Be an Executive For The New Millennium**



" ເປັນເພັດທີ່ມີຄ່າໜີ ດີກວ່າເປັນກ້ອນຫີນທີ່ສົມບູນແບບ "

ໂດຍ: ກາບແກ້ວ ທ່າມະວົງ

Max Media®



ລາງວັນນັກທຸລະກິດດີເດັ່ນ
ແຫ່ງອາຊຽນ ປີ 2011-2012



ລາງວັນບໍລິສັດທີ່ມີຊື່ສຽງ
ຕິດອາຊຽນ ປີ 2014


ບໍລິສັດ ແມັກມີເດຍ ຈຳກັດ
**MAX MEDIA CO.,LTD**
ບ້ານ ສີບຸນເຮືອງ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ
Sibounhuang Villege, Chanthabouly District, Vientiane Capital
Call center : (856-21) 264441, Fax : (856-21) 264442

# ສູດສຳເລັດ ຜູ້ບໍລິຫານຍຸກໃໝ່

**Philosophy Of Success To Be an Executive For The New Millennium**

**ນະຄອນຫຼວງວຽງຈັນ, 2014**

| | |
|---|---|
| ປຶ້ມ: | ສູດສຳເລັດຜູ້ບໍລິຫານຍຸກໃໝ່ |
| ພິມເປັນພາສາ: | ລາວ |
| ອົງການທີ່ຈັດພິມ: | ສຳນັກພິມ ແສງສຸວັນ |
| ຄະນະທີ່ປຶກສາ: | ທ່ານ ອ.ຈ ທອງປານ ພິມມາລາ, ທ່ານ ກຽດຕິສັກ ແສນພັນສີຣິ, ທ່ານ ບຸນເລີດ ຫຼວງປະເສີດ |
| ຜູ້ແຕ່ງ ແລະ ຮຽບຮຽງ: | ກາບແກ້ວ ທຳມະວົງ |
| ອອກແບບໜ້າປົກໂດຍ: | ທ່ານ ນາງ ສິດທິພອນ ອຸບປະສິດ |
| ບັນນາທິການ: | ທ່ານ ອ.ຈ ກົງເດືອນ ເນດຕະວົງ |
| ກວດແກ້ພາສາລາວ: | ທ່ານ ອ.ຈ ກົງເດືອນ ເນດຕະວົງ |
| ຂະໜາດພິມ: | 14 x 21 ຊມ |
| ຈຳນວນໜ້າ: | 178 ໜ້າ |
| ຈຳນວນພິມ: | 4,000 ຫົວ |
| ພິມທີ່: | ໂຮງພິມ ແມັກມີເດຍ |
| ເລກທະບຽນພິມ: | 533ພຈ30122013 |
| ຈຸດປະສົງການພິມ: | ເພື່ອຈຳໜ່າຍ ແລະ ແຈກຢາຍລ້າ |
| ພິມຄັ້ງທີ: | II |

ຈຳໜ່າຍໂດຍ: **ບໍລິສັດ ແມັກມີເດຍ ຈຳກັດ**
ບ້ານ ສີບຸນເຮືອງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ.
**ໂທ**: 020 77075 999, **ອີເມວ**: kabkeo.ltd@gmail.com

# ສາລະບານ


| | | |
|---|---|---|
| **ພາກທີ I: ບໍລິຫານຈັດການຕົນເອງ ກ່ອນ ເປັນຜູ້ບໍລິຫານ** | | 7 |
| 1 | ເຮັດໃນສິ່ງທີ່ທ່ານຮັກ | 9 |
| 2 | ພັດທະນາຈຸດແຂງ | 16 |
| 3 | ມີເປົ້າໝາຍໄລຍະຍາວ | 24 |
| 4 | ປູພື້ນຖານສູ່ຄວາມສໍາເລັດ | 32 |
| 5 | ສັດທາ ແລະ ຮັກໃນວຽກທີ່ເຮັດ | 42 |
| 6 | ກະຕືລືລົ້ນ ແລະ ມີລະບຽບວິໄນ | 48 |
| 7 | ບໍລິຫານສະເໜ 8 ຂໍ້ | 52 |
| 8 | ຊອກຫາເຄືອຂ່າຍ ແລະ ຜູ້ສະໜັບສະໜູນ | 64 |
| 9 | ເປັນລູກນ້ອງທີ່ຫົວໜ້າຮັກ | 70 |
| 10 | ຖ້າທາງຕັນ ກໍຈົ່ງຊອກເສັ້ນທາງໃໝ່ | 83 |
| 11 | ຄໍາສອນຂອງເຈົ້າຟ້າງຸ່ມ | 88 |
| **ພາກທີ II: ບໍລິຫານຈັດການຕົນເອງ ເມື່ອ ເປັນຜູ້ບໍລິຫານ** | | 89 |
| 1 | ເປັນຫົວໜ້າທີ່ລູກນ້ອງຮັກ | 91 |
| 2 | ຮູ້ຈູງໃຈພະນັກງານ | 103 |
| 3 | ໃຫ້ຄວາມສໍາຄັນກັບພະນັກງານທີ່ເກັ່ງ | 113 |
| 4 | ເຮັດວຽກໃຫ້ເຂົ້າກັບຜູ້ຍິງ | 121 |
| 5 | ຮຽນຮູ້ຕະຫຼອດຊີວິດ | 125 |
| 6 | ເປັນຜູ້ນໍາຍຸກໃໝ່ແທ້ | 140 |
| 7 | ສ້າງນະວັດຕະກໍາ ແລະ ການປ່ຽນແປງ | 156 |
| 8 | ຊີວິດທີ່ມີຄວາມໝາຍ | 168 |
| *I* | *ເອກະສານອ້າງອີງ* | *175* |
| *II* | *ຄໍາຂອບໃຈ* | *176* |
| *III* | *ປະຫວັດຫຍໍ້ຂອງຜູ້ຂຽນ* | *177* |

# ຄຳນຳຂອງຜູ້ຂຽນ

ຄົນເຮົາໃນໂລກນີ້ບໍ່ມີໃຜເກີດມາ ເພື່ອເປັນຜູ້ບໍລິຫານຢ່າງອັດຕະໂນມັດ, ທຸກຄົນລ້ວນແຕ່ຕ້ອງໄດ້ຜ່ານການຮຽນຮູ້ ບໍ່ວ່າຈະເປັນການຮຽນຮູ້ຈາກວຽກຕົວຈິງ, ປະສົບການ, ທິດສະດີ ຫຼື ແມ່ນກະທັ້ງຈາກສິ່ງແວດລ້ອມອ້ອມຂ້າງ. ທ່ານ ເຈ ພອລ໌ ເກັດຕີ (J. Paul Getty) ຜູ້ບໍລິຫານທີ່ປະສົບຄວາມສຳເລັດ ແລະ ອະດີດມະຫາເສດຖີທີ່ຮັ່ງມີທີ່ສຸດໃນໂລກກ່າວວ່າ "**ຈົ່ງຢ່າເຂົ້າໃຈຜິດວ່າ ການເປັນຜູ້ບໍລິຫານທີ່ປະສົບຄວາມສຳເລັດນັ້ນ ແມ່ນເປັນມາຕັ້ງແຕ່ເກີດ ຫຼື ຖ່າຍທອດໃຫ້ກັນຜ່ານທາງສາຍເລືອດ. ຂ້າພະເຈົ້າເຊື່ອວ່າ ທຸກໆຄົນໃນໂລກນີ້ສາມາດຮ່ຳຮຽນ ແລະ ຝຶກຝົນໃຫ້ເປັນຜູ້ນຳໄດ້, ຕົວຢ່າງ ຊີວິດຂອງຂ້າພະເຈົ້າເອງ ກໍບໍ່ໄດ້ເກີດມາເພື່ອເປັນຜູ້ບໍລິຫານໂດຍສະເພາະ ແລະ ກໍບໍ່ໄດ້ມີພອນສະຫວັນອັນໂດດເດັ່ນ ຫຼື ຄວາມສາມາດພິເສດໃດໆ ໃນການບໍລິຫານທຸລະກິດມາກ່ອນເລີຍ, ແຕ່ສຸດທ້າຍ ຂ້າພະເຈົ້າກໍປະສົບຄວາມສຳເລັດໄດ້**". ການປະສົບຄວາມສຳເລັດໃນວຽກງານ ບໍ່ແມ່ນເລື່ອງບັງເອີນ ຫຼື ໂຊກຊາຕາ-ຟ້າປະທານໃດໆ. ແນ່ນອນ, ເຮົາຍັງບໍ່ທັນສາມາດຊອກຫາທິດສະດີໃດ ເພື່ອທີ່ຈະໂຕ້ແຍ້ງວ່າໂຊກຊາຕາອາດຈະມີສ່ວນຊ່ວຍສຳລັບບາງຄົນ ( ຂໍຍ້ຳວ່າ ບາງຄົນ ), ແຕ່ສ່ວນໃຫຍ່ແລ້ວ ຄວາມສຳເລັດຂອງຄົນເຮົາ ແມ່ນເກີດມາຈາກຄວາມຕັ້ງໃຈທີ່ຈະຮຽນຮູ້ ເພື່ອປັບປຸງແປງຕົນເອງ ແລະ ລົງມືປະຕິບັດຢ່າງຕໍ່ເນື່ອງ ດ້ວຍຄວາມມຸ່ງໝັ້ນ ແລະ ທຸ່ມເທ ຄືດັ່ງ ທ່ານ ໂທມັສ໌ ເອ ເອດີສັນ (Thomas A. Edison) ສຸດຍອດຜູ້ບໍລິຫານ ແລະ ນັກວິທະຍາສາດຂອງໂລກ ກ່າວວ່າ "**ອັດສະລິຍະ ຫຼື ພອນສະຫວັນເປັນພຽງ 1% ໃນຄວາມສຳເລັດຂອງຂ້າພະເຈົ້າ, ແຕ່ 99% ຂອງຄວາມສຳເລັດແມ່ນມາຈາກຄວາມອົດທົນ ແລະ ພະຍາຍາມ**".

ເປັນຫຍັງເຮົາຈຶ່ງຕ້ອງອົດທົນພະຍາຍາມປ່ຽນແປງ ແລະ ຮຽນຮູ້ສິ່ງໃໝ່? ນີ້ກໍ ຍ້ອນວ່າ ບໍ່ມີສິ່ງໃດທີ່ແນ່ນອນໃນໂລກນີ້ ຍົກເວັ້ນແຕ່ "**ການປ່ຽນແປງ**", ຖ້າເຮົາບໍ່ ປ່ຽນແປງໃນມື້ນີ້ ເຮົາກໍຈະບໍ່ກ້າວໜ້າໃນອະນາຄົດ ຄືດັ່ງ ທ່ານ ອາລ໌ເບີທ໌ ໄອສ໌ ໄຕນ໌ (Albert Einstein) ນັກວິທະຍາສາດຜູ້ມີຊື່ສຽງຂອງໂລກ ກ່າວວ່າ "**ມີແຕ່ ຄົນບ້າເທົ່ານັ້ນ ທີ່ຈະເຮັດແຕ່ສິ່ງເກົ່າຊ້ຳແລ້ວຊ້ຳອີກ ແຕ່ຊ້ຳພັດຫວັງຜົນໄດ້ຮັບທີ່ ແຕກຕ່າງ**" ຫຼື "**Insanity is doing the same thing over and over again and expecting different results**". ດັ່ງນັ້ນ ເຮົາຈຶ່ງຕ້ອງປ່ຽນແປງ ແລະ ຮຽນ ຮູ້ສິ່ງໃໝ່ ແລະ ກໍຄວນເລີ່ມຕົ້ນຕັ້ງແຕ່ມື້ນີ້ເປັນຕົ້ນໄປ ຄືດັ່ງຄຳສຸພາສິດຈີນທີ່ວ່າ "**ເວລາທີ່ດີທີ່ສຸດໃນການປູກຕົ້ນໄມ້ ແມ່ນ 20 ປີທີ່ຜ່ານມາ, ແຕ່ເວລາທີ່ດີທີ່ສຸດ ໃນການປູກຕົ້ນໄມ້ຄັ້ງທີສອງ ແມ່ນດຽວນີ້**".

ສະນັ້ນ ປຶ້ມເຫຼັ້ມນີ້ຈຶ່ງຖືກຂຽນຂຶ້ນ ເພື່ອຕອບສະໜອງຕາມຈຸດປະສົງດັ່ງກ່າວ ໂດຍການຮິບໂຮມເອົາສູດຄວາມສຳເລັດ ໃນການພັດທະນາຕົນເອງຂອງສຸດ ຍອດຜູ້ບໍລິຫານຈາກທົ່ວໂລກ ລວມທັງຍຸກເກົ່າ ແລະ ຍຸກໃໝ່ ໃຫ້ເກີດແຫຼ່ງ ຄວາມຮູ້ທີ່ຫຼາກຫຼາຍ ເພື່ອເປັນແນວທາງໃຫ້ທ່ານຜູ້ອ່ານ ສາມາດນຳໄປປະຍຸກ ໃຊ້ ໃນການພັດທະນາຕົນເອງ ສູ່ການເປັນຜູ້ບໍລິຫານຍຸກໃໝ່ທີ່ປະສົບຄວາມສຳ ເລັດໃນອະນາຄົດ. ຂ້າພະເຈົ້າມີຄວາມເຊື່ອໝັ້ນຢ່າງແຮງກ້າວ່າ ດ້ວຍປະສົບ ການຂອງຜູ້ບໍລິຫານຫຼາຍໆທ່ານ ທີ່ຂ້າພະເຈົ້າພະຍາຍາມນຳມາຄັດສັນ ແລະ ຮວບຮວມໄວ້ໃນປຶ້ມເຫຼັ້ມນີ້ ຈະສາມາດເປັນແຮງບັນດານໃຈ ໃຫ້ທ່ານມີຄວາມ ກ້າຫານທີ່ຈະຕັດສິນໃຈເລີ່ມຕົ້ນປ່ຽນແປງ ເພື່ອສິ່ງໃໝ່ໆ ທີ່ດີກວ່າ ຢ່າງແນ່ນອນ.

ຂ້າພະເຈົ້າຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນມາຍັງບັນດາທ່ານຜູ້ທີ່ ໃຫ້ການຊ່ວຍເຫຼືອ, ສະໜັບສະໜູນ ພ້ອມເປັນກຳລັງໃຈ ແກ່ຂ້າພະເຈົ້າໃນການ ຂຽນປຶ້ມເຫຼັ້ມນີ້ຈົນປະສົບຄວາມສຳເລັດ. ລຳພັງຂ້າພະເຈົ້າພຽງຄົນດຽວ ກໍຄົງບໍ່ ສາມາດຂຽນປຶ້ມເຫຼັ້ມນີ້ໄດ້ ແລະ ຂໍຂອບໃຈທ່ານຜູ້ອ່ານໜົດທຸກຄົນທີ່ເປັນກຳລັງ ໃຈ ແລະ ຊ່ວຍອຸດໜູນປຶ້ມຂອງຂ້າພະເຈົ້າຕະຫຼອດມາ. ພ້ອມນີ້ ຂ້າພະເຈົ້າຕ້ອງ ຂໍອະໄພ ດ້ວຍຄວາມຈິງໃຈ ບໍ່ວ່າດ້ວຍເຫດຜົນໃດກໍຕາມ, ຖ້າຫາກປຶ້ມເຫຼັ້ມນີ້

ມີຄຳເວົ້າ ຫຼື ເນື້ອໃນບາງສ່ວນທີ່ຂັດກັບຄວາມຮູ້ສຶກ ຫຼື ປະສົບການຈິງຂອງທ່ານຜູ້ປະສົບຄວາມສຳເລັດມາກ່ອນແລ້ວ, ຂ້າພະເຈົ້າຍິນດີ ແລະ ຈິງໃຈຮັບເອົາຄວາມຄິດເຫັນ ແລະ ຄຳຕຳໜິຕິຊົມທີ່ມີລັກສະນະສ້າງສັນ ເພື່ອຈະໄດ້ປັບປຸງ ແລະ ແກ້ໄຂໃຫ້ດີຂຶ້ນໃນການພິມຄັ້ງຕໍ່ໄປ.

ດ້ວຍຄວາມເຄົາລົບ

**ກາບແກ້ວ ທຳມະວົງ**

# ພາກທີ: I

# ບໍລິຫານຈັດການຕົນເອງ ກ່ອນ ເປັນຜູ້ບໍລິຫານ

1. ເຮັດໃນສິ່ງທີ່ທ່ານຮັກ
2. ພັດທະນາຈຸດແຂງ
3. ມີເປົ້າໝາຍໄລຍະຍາວ
4. ປູພື້ນຖານສູ່ຄວາມສຳເລັດ
5. ສັດທາ ແລະ ຮັກໃນວຽກທີ່ເຮັດ
6. ກະຕືລືລົ້ນ ແລະ ມີລະບຽບວິໄນ
7. ບໍລິຫານສະເໜ 8 ຂໍ້
8. ຊອກຫາເຄືອຂ່າຍ ແລະ ຜູ້ສະໜັບສະໜູນ
9. ເປັນລູກນ້ອງ ທີ່ຫົວໜ້າຮັກ
10. ຖ້າທາງຕັນ ກໍຈົ່ງຊອກເສັ້ນທາງໃໝ່

24/VII
ບ້ານ ຈຳໜ່າຍ

# ຄຳຄົມ

"ຈົ່ງເລືອກອາຊີບທີ່ທ່ານຮັກ ແລ້ວທ່ານຈະບໍ່ຮູ້ສຶກວ່າ
ຈຳເປັນຕ້ອງເຮັດວຽກເລີຍ ແມ່ນແຕ່ມື້ດຽວໃນຊີວິດ"

ຫຼື

***"Choose a job you love, and you will never have to work a day in your life"***



(ຮູບພາບປະກອບ: http://en.wikipedia.org/wiki/Confucius )

ໂດຍ ທ່ານ ຂົງຈື້ (Confucius) ນັກປາດຜູ້ມີຊື່ສຽງຊາວຈີນ

# 01

# "ເຮັດໃນສິ່ງທີ່ທ່ານຮັກ"

ຈຸດເລີ່ມຕົ້ນຂອງເສັ້ນທາງສູ່ຄວາມສໍາເລັດ ກໍຄືການເຮັດໃນສິ່ງທີ່ທ່ານຮັກ, ຍ້ອນວ່າ ຄົນທີ່ປະສົບຄວາມສໍາເລັດສ່ວນຫຼາຍໃນໂລກນີ້ ພວກເຂົາເລືອກທີ່ຈະພັດທະນາອາຊີບຂອງຕົນຈາກສິ່ງທີ່ຮັກ ໃຫ້ກາຍເປັນສຸດຍອດຂອງຜູ້ນໍາໃນວົງການອາຊີບນັ້ນ ເຊັ່ນ: ທ່ານ ບິລເກດສ (Bill Gates) ສົນໃຈເລື່ອງຄອມພິວເຕີຕັ້ງແຕ່ຕອນອາຍຸ 13 ປີ ແລະ ຍັງຮຽນຢູ່ທີ່ໂຮງຮຽນປະຖົມເລກໄຊ (Lakeside School) ແລະ ຕອນນັ້ນ ເພິ່ນສົນໃຈການຂຽນໂປຣແກຣມຄອມພິວເຕີຂອງບໍລິສັດ ຈີອີ (GE) ເປັນຊີວິດຈິດໃຈ, ຍ້ອນຄວາມຮັກໃນຄອມພິວເຕີ ສຸດທ້າຍທ່ານ ບິລເກດສ ກໍສ້າງຕັ້ງບໍລິສັດ ໄມໂຄຣຊ໊ອບທ໌ (Microsoft) ແລະ ກາຍເປັນມະຫາເສດຖີ ອັນດັບໜຶ່ງຂອງໂລກ.

ທ່ານ ວໍເລສ໌ ດີ. ວັດໂທສ໌ (Wallace D. Wattles) ຜູ້ຂຽນປຶ້ມ The Science of Getting Rich (ສາດແຫ່ງຄວາມຮັ່ງມີ) ທີ່ຂາຍດີຕະຫຼອດ 100 ປີ ຜ່ານມາ ໄດ້ໃຫ້ຄໍາແນະນໍາວ່າ **"ບໍ່ວ່າທ່ານຈະຮຽນສາຂາວິຊາທີ່ບໍ່ໄດ້ຮັບຄວາມນິຍົມຢູ່ໃນສັງຄົມກໍຕາມ, ແຕ່ຖ້າທ່ານຮັກໃນວິຊານັ້ນແທ້ໆ ແລະ ບວກໃສ່ຄວາມມຸ່ງໝັ້ນທຸ້ມເທຕໍ່ເສັ້ນທາງສາຍອາຊີບນັ້ນແລ້ວ ໂອກາດສູ່ຄວາມສໍາເລັດຂອງທ່ານກໍຈະມີຫຼາຍກວ່າການໄປສົນໃຈອາຊີບອື່ນ"**, ຍ້ອນວ່າ ເມື່ອທ່ານໄດ້ເຮັດໃນສິ່ງທີ່ຮັກ, ນອກຈາກຈະມີຄວາມສຸກກັບມັນແລ້ວ ມັນຍັງຊ່ວຍເພີ່ມພະລັງ ແລະ ປົດປ່ອຍ

ຂີດຄວາມສາມາດທີ່ເຊື່ອງຊ້ອນຢູ່ພາຍໃນຕົວຂອງທ່ານອອກມາອີກດ້ວຍ, ສຸດທ້າຍ ຄວາມສໍາເລັດ ມັນກໍຈະມາຫາທ່ານ ເຊັ່ນ: ທ່ານ ນາງ ເຈ ເຄ ໂຣລິງ (J.K Rowling) ເຄີຍມີຊີວິດທີ່ທຸກຍາກ ແລະ ຫວ່າງງານມາກ່ອນ, ຕ້ອງໄປອາໄສເຄື່ອງປັບອາກາດຂອງຮ້ານອາຫານ ເພື່ອຂຽນນະວະນິຍາຍເລື່ອງ ຮາຣີ ປອທ໌ເຕີ (Harry Potter), ຍ້ອນຄວາມຮັກໃນອາຊີບຈຶ່ງອົດທົນສູ້ຢ່າງມີຄວາມສຸກ, ສຸດທ້າຍ ທ່ານກໍກາຍເປັນຜູ້ຍິງທີ່ຮັ່ງມີທີ່ສຸດຢູ່ທີ່ທະວີບເອີຣົບ ຄືດັ່ງຄໍາເວົ້າຂອງ ທ່ານ ຂົງຈື (Confucius) ນັກປາດຜູ້ມີຊື່ສຽງຊາວຈີນກ່າວວ່າ **"ຈົ່ງເລືອກອາຊີບທີ່ທ່ານຮັກແລ້ວ ທ່ານຈະບໍ່ຮູ້ສຶກວ່າຈໍາເປັນຕ້ອງເຮັດວຽກເລີຍ ແມ່ນແຕ່ມື້ດຽວໃນຊີວິດ"** ຫຼື **"Choose a job you love, and you will never have to work a day in your life"**.

ແຕ່ເຖິງຢ່າງໃດກໍຕາມ ຖ້າວ່າສາຂາວິຊາທີ່ທ່ານກໍາລັງຮຽນ ຫຼື ອາຊີບທີ່ທ່ານກໍາລັງເຮັດໃນປັດຈຸບັນນີ້ ມັນບໍ່ແມ່ນສິ່ງທີ່ທ່ານຮັກ, ແຕ່ຍ້ອນຄວາມຈໍາເປັນທ່ານຈຶ່ງຝືນໃຈເຮັດ ອາດຈະເນື່ອງມາຈາກຄົນໃນຄອບຄົວຢາກໃຫ້ເຮັດ, ມັນເປັນວຽກທີ່ມີກຽດ, ເຮັດເພື່ອຫາລາຍໄດ້ລ້ຽງຄອບຄົວ ແລະ ຍ້ອນສາເຫດອື່ນໆອີກກໍຕາມ. ແຕ່ຂ້າພະເຈົ້າເຊື່ອວ່າ ທ່ານຍັງສາມາດເຮັດ ແລະສຶກສາໃນສິ່ງທີ່ຕົນຮັກໄດ້. ໂດຍທ່ານສາມາດໃຊ້ເວລາຫວ່າງ ຫຼັງເລີກວຽກ ຫຼື ເລີກຈາກການຮຽນປະຈໍາກໍໄດ້. ຂ້າພະເຈົ້າເອງກໍເຄີຍປະຕິບັດຕາມແບບວິທີນີ້ມາກ່ອນ, ເພາະວ່າສະພາບແວດລ້ອມ ແລະ ເງື່ອນໄຂໃນຊີວິດຂອງແຕ່ລະຄົນນັ້ນ ອາດຈະບໍ່ຄືກັນ, ແຕ່ສິ່ງສໍາຄັນກວ່າໝູ່ ແມ່ນທ່ານໄດ້ຮູ້ສິ່ງທີ່ຕົນຮັກ ແລະ ມີຄວາມຕັ້ງໃຈທີ່ຈະເຮັດມັນໃນອະນາຄົດ ຄືດັ່ງ ທ່ານ ສະຕີບ ຈັອບສ໌ (Steve Jobs) ອະດີດຜູ້ກໍ່ຕັ້ງບໍລິສັດ ແອັບໂປ (Apple) ໄດ້ແນະນໍາຢູ່ສະເໝີວ່າ **"ຂໍໃຫ້ທຸກຄົນຈົ່ງສະແຫວງຫາວຽກທີ່ຕົນຮັກ"**, ກໍຍ້ອນ ທ່ານ ສະຕີບ ຈັອບສ໌ ເຮັດໃນອາຊີບທີ່ຕົນເອງຮັກ ທ່ານຈຶ່ງປະສົບຄວາມສໍາເລັດ ແລະ ກາຍເປັນນັກປະດິດທີ່ຍິ່ງໃຫຍ່ຂອງໂລກ. ກ່ອນທີ່ທ່ານຈະຈາກໂລກນີ້ໄປ ທ່ານຍັງໄດ້ໃຫ້ສູດສໍາເລັດແກ່ຄົນໜຸ່ມລຸ້ນໃໝ່ ໂດຍທ່ານກ່າວວ່າ **"ເວລາຂອງທ່ານມີຂີດຈໍາກັດ, ສະນັ້ນ ຢ່າໄປເສຍເວລາໃນການດໍາລົງ**

ຊີວິດຂອງຄົນອື່ນ. ຢ່າຍຶດຕິດກັບຄວາມເຊື່ອທີ່ບໍ່ມີຂໍ້ພິສູດ ໂດຍການດໍາເນີນຊີວິດຕາມແນວຄວາມຄິດຂອງຄົນອື່ນ. ຢ່າຍອມໃຫ້ສຽງຈາກຄວາມຄິດເຫັນຂອງຄົນອື່ນມາຄອບງໍາສຽງຈາກພາຍໃນຕົວຕົນຂອງທ່ານ. ແລະ ທີ່ສໍາຄັນທີ່ສຸດແມ່ນທ່ານຕ້ອງມີຄວາມກ້າຫານພໍ ທີ່ຈະກ້າວເດີນໄປຕາມເສັ້ນທາງທີ່ຫົວໃຈ ແລະສັນຊາດຕະຍານຂອງທ່ານບອກ, ຍ້ອນຫົວໃຈ ແລະ ສັນຊາດຕະຍານຂອງທ່ານຮູ້ດີວ່າ ທ່ານຕ້ອງການເປັນຫຍັງແທ້ໆ, ສ່ວນທີ່ເຫຼືອອື່ນໆນັ້ນ ເປັນພຽງແຕ່ສິ່ງສໍາຮອງ" ຫຼື "**Your time is limited, so don't waste it living someone else's life. Don't be trapped by dogma - which is living with the results of other people's thinking. Don't let the noise of other's opinions drown out your own inner voice. And most important, have the courage to follow your heart and intuition. They somehow already know what you truly want to become. Everything else is secondary**".

ທ່ານ ອັງ ລີ (Ang Lee) ຜູ້ສ້າງຮູບເງົາທີ່ມີຊື່ສຽງຂອງໂລກ ເຊິ່ງເປັນນັກສ້າງຮູບເງົາຜູ້ທໍາອິດ ຈາກທະວີບອາຊີ ທີ່ໄດ້ຮັບລາງວັນອອສກາ (The first person of Asian descent to win the Best Director Oscar), ແຕ່ທ່ານຮູ້ບໍ່ວ່າ ກ່ອນທີ່ທ່ານ ອັງ ລີ ຈະມີມື້ນີ້ໄດ້ນັ້ນ ທ່ານຕ້ອງອົດທົນເຮັດວຽກໃນສິ່ງທີ່ຮັກ ແຕ່ຖືກຄັດຄ້ານຈາກຄົນອື່ນ ໂດຍສະເພາະແມ່ນພໍ່ ທີ່ຕ້ອງການໃຫ້ເພິ່ນເສັງເຂົ້າມະຫາວິທະຍາໄລ ເພື່ອທີ່ຈະມີອາຊີບເປັນຄູສິບແທນພໍ່, ແຕ່ທ່ານ ອັງ ລີ ກໍເສັງຕົກຮອດສອງເທື່ອ, ເພິ່ນຈຶ່ງສະໝັກເຂົ້າຮຽນວິຊາຊີບດ້ານສິລະປະແຫ່ງໄຕ້ຫວັນແທນ. ຫຼັງຈາກຮຽນຈົບດ້ານສິລະປະແລ້ວ ພໍ່ຂອງເພິ່ນກໍຍັງບໍ່ລົດລະຄວາມພະຍາຍາມ ທີ່ຢາກໃຫ້ເພິ່ນເຮັດວຽກເປັນຄູຄືເກົ່າ, ແຕ່ເພິ່ນກໍປະຕິເສດ ຢ່າງເດັດດ່ຽວ ໂດຍຕັດສິນໃຈເລືອກທີ່ຈະເດີນຕາມເສັ້ນທາງອາຊີບທີ່ຕົນເອງໄຝ່ຝັນໄວ້ ແລະ ເຮັດວຽກກ່ຽວກັບການສ້າງຮູບເງົາຕາມທີ່ຕົນຮັກ, ເພິ່ນຈຶ່ງໄດ້ເດີນທາງໄປຮຽນຕໍ່ດ້ານການສະແດງລະຄອນທີ່ ມະຫາວິທະຍາໄລ ອິລລີນອຍສ໌ (University of Illinois) ປະເທດ ສະຫະລັດ ອາເມຣິກາ. ການຕໍ່ສູ້ເພື່ອໃຫ້ໄດ້

ເຮັດໃນສິ່ງທີ່ຕົນຮັກ ຂອງທ່ານ ອັງ ລີ ປະກົດວ່າ ເພີ່ມທະວີຄວາມທ້າທາຍຂຶ້ນຫຼາຍເທົ່າ. ເມື່ອຮຽນຈົບ, ທ່ານ ໄດ້ແຕ່ງງານກັບ ທ່ານ ນາງ ເຈນ ລິນ (Jane Lin) ເຊິ່ງຖືໄດ້ວ່າ ທ່ານໄດ້ປະສົບຄວາມສໍາເລັດໃນຂັ້ນທີ່ໜ້າເພິ່ງພໍໃຈທາງດ້ານຄວາມຮັກ ແລະ ການເລີ່ມຕົ້ນຊີວິດຄອບຄົວກັບຄົນທີ່ຕົນຮັກ. ແຕ່ໃນທາງກົງກັນຂ້າມ, ທາງດ້ານວຽກງານແລ້ວ ທ່ານ ອັງ ລີ ຕ້ອງກາຍເປັນຄົນຫວ່າງງານເຖິງ 6 ປີ. ທ່ານ ອັງ ລີ ຖືກມອງວ່າເປັນຄົນອາຊີທີ່ມີຄວາມທະເຍີທະຍານສູງເກີນໄປ ສໍາລັບການທີ່ຈະເປັນຜູ້ອໍານວຍການສ້າງຮູບເງົາ ຢູ່ທີ່ປະເທດ ສະຫະລັດ ອາເມຣິກາ ທີ່ມີການແຂ່ງຂັນສູງ ເຊິ່ງຖືວ່າເປັນເລື່ອງທີ່ເປັນໄປໄດ້ຍາກທີ່ສຸດ. ຕະຫຼອດໄລຍະເວລາ 6 ປີ ທ່ານຕ້ອງທໍາໜ້າທີ່ ຍ້ອນຄວາມຈໍາເປັນ ຄືການເປັນພໍ່ບ້ານໃຫ້ພັນລະຍານັ້ນ ຖືວ່າເປັນຊ່ວງໄລຍະເວລາທີ່ລໍາບາກໃຈ ພ້ອມທັງຖືກປະນາມຈາກສັງຄົມຫຼາຍທີ່ສຸດ. ແຕ່ຍ້ອນຄວາມພະຍາຍາມຢ່າງບໍ່ລົດລະ ໃນການສະແຫວງຫາໂອກາດ ແລະ ຊ່ອງທາງ ເພື່ອໃຫ້ໄດ້ເຮັດອາຊີບທີ່ຕົນຮັກ, ບວກກັບຄວາມເຂົ້າໃຈຂອງພັນລະຍາ ທີ່ຮັບຮູ້ໃນຄວາມສັດທາຂອງສາມີຕໍ່ອາຊີບທີ່ຕົນຮັກນັ້ນ ກໍຄືການເປັນນັກສ້າງຮູບເງົາ. ໃນທີ່ສຸດ ທ່ານ ອັງ ລີ ກໍສາມາດຊອກວຽກໄດ້ໃນປີ 1997. ແລະ ທ່ານເຊື່ອບໍ່ວ່າ ພຽງໄລຍະເວລາ 3 ປີ ທີ່ໄດ້ກົ້ງເກືອກລີເລືອໃນວຽກທີ່ຕົນຮັກ, ທ່ານ ອັງ ລີ ກໍກາຍເປັນຜູ້ອໍານວຍການສ້າງຮູບເງົາທີ່ມີຊື່ສຽງໃນອັນດັບຕົ້ນໆຂອງໂລກ ໃນປີ 2000 ແລະ ເປັນນັກສ້າງຮູບເງົາຜູ້ທໍາອິດຈາກທະວີບອາຊີ ທີ່ສາມາດເຮັດໃຫ້ທຸກຄົນໃນວົງການຮູບເງົາແຫ່ງເມືອງຮອນລີວູດ (Hollywood) ແລະ ຜູ້ຊົມໃນທົ່ວໂລກ ຈົດຈໍາຜູ້ສ້າງທີ່ມີຊື່ວ່າ ອັງ ລີ ຈົນເຖິງປັດຈຸບັນ. ນີ້ຄືດັ່ງຄໍາເວົ້າທີ່ວ່າ "**ຄວາມອົດທົນ ມີລົດຊາດຂົມ ແຕ່ຜົນຂອງມັນ ມີລົດຊາດຫວານ**".

ສ່ວນທ່ານ ໂຊອິຈິໂຣ ຮອນດ້າ (Soichiro Honda) ເກີດໃນຄອບຄົວທີ່ທຸກຍາກ ໃນເມືອງນ້ອຍໆແຫ່ງໜຶ່ງຂອງປະເທດຍີ່ປຸ່ນ, ທ່ານມີຄວາມຮັກ ແລະ ຫຼົງໄຫຼໃນເຄື່ອງຈັກມາຕັ້ງແຕ່ອາຍຸໄດ້ 2 ປີ, ທ່ານມັກນັ່ງເບິ່ງລົດກ່ຽວເຂົ້າຈາກໄຮ່ນາທີ່ຢູ່ໃກ້ໆເຮືອນຢ່າງມີຄວາມສຸກຢູ່ສະເໝີ, ຍ້ອນມີຄວາມຮັກໃນເຄື່ອງຈັກ

ທ່ານຈຶ່ງມີຄວາມກະຕືລືລົ້ນຢາກຮູ້ຢາກເຫັນກ່ຽວກັບມັນຕື່ມອີກ ເຊິ່ງທ່ານໄດ້ບັນຍາຍວ່າ "**ນີ້ເປັນບົດເພງຄັ້ງທຳອິດຂອງຂ້າພະເຈົ້າ ທີ່ເຫັນຄວັນສີເທົາລ່ອງລອຍອອກມາຈາກທໍ່ຄວັນເຄື່ອງຈັກ, ມີມື້ໜຶ່ງ ຂ້າພະເຈົ້າໄດ້ຂໍຮ້ອງໃຫ້ພໍ່ເຖົ້າ ພາໄປເບິ່ງມັນຢູ່ໃກ້ໆ ຫຼັງຈາກນັ້ນ ຂ້າພະເຈົ້າກໍມັກໄປຢູ່ບ່ອນນັ້ນເປັນປະຈຳ, ຂ້າພະເຈົ້າຮັກກິ່ນຂອງນ້ຳມັນເຄື່ອງທີ່ລະເຫີຍຂຶ້ນສູ່ອາກາດ ແລະ ມັກຟັງສຽງຂອງເຄື່ອງຈັກທີ່ດັງຮື່ມໆ, ຂ້າພະເຈົ້າເຝົ້າເບິ່ງມັນຢູ່ຫຼາຍຊົ່ວໂມງ ຈົນໃນທີ່ສຸດພໍ່ເຖົ້າຂອງຂ້າພະເຈົ້າ ກໍມັກມາເອີ້ນໃຫ້ກັບເມື່ອເຮືອນຢູ່ເລື້ອຍໆ**". ຍ້ອນທ່ານໂຊອິຈິໂຣ ຮອນດ້າຮັກໃນອາຊີບທີ່ກ່ຽວກັບເຄື່ອງຈັກ, ທ່ານຈຶ່ງກໍ່ຕັ້ງບໍລິສັດ ຮອນດ້າ ມໍເຕີ (Honda Motor) ຂຶ້ນມາແລ້ວ ພັດທະນາຈົນກາຍເປັນບໍລິສັດທີ່ມີຊື່ສຽງໃນການຜະລິດລົດຈັກ ແລະ ລົດໃຫຍ່ ຂອງປະເທດຍີ່ປຸ່ນ ແລະ ຂອງໂລກ.

ແມ່ນຢູ່ວ່າ ກ່ອນເລືອກເຮັດທຸລະກິດປະເພດໃດ ກໍຕ້ອງສຳຫຼວດເບິ່ງຄວາມຕ້ອງການຂອງລູກຄ້າ ແລະ ຂະໜາດຂອງຕະຫຼາດວ່າໃຫຍ່ພຽງພໍ ຫຼື ບໍ່? ເຖິງວ່າມັນເປັນສິ່ງທີ່ທ່ານຮັກ ແຕ່ຖ້າລູກຄ້າບໍ່ຕ້ອງການແລ້ວ ມັນກໍຍາກທີ່ທຸລະກິດດັ່ງກ່າວຈະປະສົບຄວາມສຳເລັດ. ແຕ່ເຖິງຢ່າງໃດກໍຕາມ ຖ້າສິ່ງທີ່ຈະເຮັດນັ້ນມັນກ່ຽວຂ້ອງກັບສິ່ງທີ່ທ່ານຮັກແລ້ວ ໂອກາດແຫ່ງຄວາມສຳເລັດກໍຈະມີຫຼາຍກວ່າ, ສະນັ້ນ ຖ້າທ່ານຕ້ອງການຄວາມສຳເລັດ ທ່ານກໍຄວນເຮັດໃນສິ່ງທີ່ທ່ານຮັກ ຄືດັ່ງຄຳຄົມທີ່ວ່າ "**ຈົ່ງຮັກໃນວຽກທີ່ເຮັດ ຈົ່ງເຮັດໃນວຽກທີ່ຮັກ, ເດີນທາງຢ່າງຊ້າໆ ແຕ່ໝັ້ນຄົງ ແລ້ວ ທ່ານກໍຈະເຖິງຈຸດໝາຍແຫ່ງຄວາມສຳເລັດ**".

ແຕ່ຖ້າສົມມຸດວ່າ ເວລານີ້ ທ່ານກຳລັງເລືອກຮຽນ ທ່ານຈົ່ງຫຼີກເວັ້ນການຮຽນໃນສາຂາທີ່ມີຄົນນິຍົມ ຫຼື ມີກະແສເຫັ່ກັນຮຽນຫຼາຍ, ເພາະວ່າໂອກາດທີ່ຈະໄດ້ເຮັດວຽກຫຼັງຈາກທີ່ຮຽນຈົບມານັ້ນ ແມ່ນຍາກ, ຍ້ອນມີການແຂ່ງຂັນທີ່ສູງ ໂດຍອີງຕາມທິດສະດີ "**ຄວາມຕ້ອງການ ແລະ ການສະໜອງ**" ຫຼື "**Demand and Supply**" ທີ່ເປັນຫຼັກການທາງເສດຖະສາດ, ຖ້າສິ່ງໃດທີ່ມີການສະໜອງຫຼາຍເກີນກວ່າຄວາມຕ້ອງການແລ້ວ ມູນຄ່າ ຫຼື ຄວາມຕ້ອງການໃນສິ່ງນັ້ນ ກໍຈະຫຼຸດ

ລົງ ເຊິ່ງໝາຍຄວາມວ່າ ເມື່ອຮຽນຈົບມາແລ້ວ ວຽກທີ່ຈະເຮັດກໍບໍ່ມີ, ຕ້ອງໄປເຮັດວຽກໃນສາຂາທີ່ຕົນເອງບໍ່ໄດ້ຮຽນມາ ຄືດັ່ງທີ່ທ່ານເຫັນໃນສັງຄົມປັດຈຸບັນນີ້.

ດັ່ງນັ້ນ ກ່ອນຕັດສິນໃຈເລືອກຮຽນໃນສາຂາໃດນັ້ນ ທ່ານບໍ່ຄວນເລືອກຮຽນຍ້ອນກະແສເຫັ່ກັນຂອງສັງຄົມ, ຍ້ອນໝູ່ເພື່ອນ ຫຼື ຍ້ອນຄົນໃນຄອບຄົວຢາກໃຫ້ຮຽນ, ທ່ານຄວນເປັນຄົນຕັດສິນໃຈເອງ, ເພາະວ່າຊີວິດມັນເປັນຂອງທ່ານ ແລະ ທ່ານຄວນຄິດໃຫ້ໄກເຖິງຄວາມຕ້ອງການຂອງຕະຫຼາດໃນອະນາຄົດ, ແຕ່ທີ່ສໍາຄັນກວ່ານັ້ນ ແມ່ນໃຫ້ເລືອກຮຽນໃນສາຂາທີ່ຕົນເອງຮັກແທ້ໆ ຄືດັ່ງປັດຊະຍາທາງການສຶກສາຂອງ ປະເທດ ອັງກິດທີ່ວ່າ **"ໃຫ້ທຸກຄົນໄດ້ຮຽນໃນສິ່ງທີ່ຕົນເອງຮັກ, ຕົນເອງມີຄວາມຊໍານານ ແລະ ມີຄວາມສຸກ ເພື່ອຄວາມສໍາເລັດໃນຊີວິດ ແລະ ວຽກງານ"** ໂດຍການສ້າງລະບົບການສຶກສາ ເພື່ອມຸ່ງເນັ້ນໃສ່ການຜະລິດຄົນໃຫ້ມີຄວາມຊ່ຽວຊານສະເພາະດ້ານ ຜ່ານການຮຽນທີ່ເຂັ້ມແຂງ ແລະ ນັກຮຽນກໍມີໂອກາດເລືອກຮຽນເອງ, ຮູ້ຈັກຕົວຕົນທີ່ແທ້ຈິງຂອງຕົນເອງ, ດັ່ງນັ້ນ ລະບົບການສຶກສາຂອງປະເທດອັງກິດ ຈຶ່ງໄດ້ຮັບຄວາມນິຍົມໄປທົ່ວໂລກ.

ສະນັ້ນ ຖ້າຕ້ອງການຄວາມສໍາເລັດ ທ່ານຄວນເຮັດໃນສິ່ງທີ່ທ່ານຮັກ ຄືດັ່ງທ່ານ ວໍເຣັນ ບັຟເຟັທ (Warren Buffett) ມະຫາເສດຖີອັນດັບສອງຂອງໂລກ ກ່າວວ່າ **"ທ່ານຄວນຈະເຮັດໃນສິ່ງທີ່ທ່ານຮັກ ແລະ ເພີດເພີນໄປກັບມັນ, ຖ້າບໍ່ດັ່ງນັ້ນແລ້ວ ທ່ານກໍຄວນຊອກວຽກໃໝ່ເຮັດ, ຕາບໃດທີ່ທ່ານເຮັດໃນສິ່ງທີ່ທ່ານມ່ວນກັບມັນ ທ່ານກໍຈະໄດ້ຮັບສິ່ງຕອບແທນທີ່ດີ, ມັນບໍ່ສໍາຄັນວ່າທ່ານຈະມີເງິນໜຶ່ງລ້ານ, ສິບລ້ານ ຫຼື ຮ້ອຍລ້ານໂດລາ ແຕ່ຖ້າຫາກທ່ານເລືອກທີ່ຈະເຮັດໃນສິ່ງທີ່ຕົນຮັກແລ້ວ ມັນບໍ່ສໍາຄັນດອກວ່າ ທ່ານຈະມີເງິນໜ້ອຍ ຫຼື ຫຼາຍປານໃດ, ຍ້ອນວ່າສິ່ງສໍາຄັນກວ່າໝູ່ແມ່ນທ່ານໄດ້ເຮັດໃນສິ່ງທີ່ຕົນເອງປາຖະໜາ ແລະ ເງິນມັນກໍຈະຕາມມາເອງ"**.

# ຄຳຄົມ

## “ຄວາມສຳເລັດຂອງຄົນເຮົານັ້ນ ຕ້ອງເລີ່ມຕົ້ນ ມາຈາກສິ່ງທີ່ເຮົາມີຄວາມສາມາດ ແລະ ຊຳນານ”



(ຮູບພາບປະກອບ: http://en.wikipedia.org/wiki/Konosuke_Matsushita)

ໂດຍ ທ່ານ ໂກໂນຊຸເກະ ມັດສຸຊິຕະ (Konosuke Matsushita) ປະທານ ບໍລິສັດ ພານາໂຊນິກ (Panasonic) ທີ່ຖືກຂະໜານນາມວ່າ “**ເທບແຫ່ງນັກບໍລິຫານ**” ຊາວຍີ່ປຸ່ນ ຫຼື “God of Management”

# 02

# "ພັດທະນາຈຸດແຂງ"

ບໍ່ສະເພາະແຕ່ການເຮັດໃນສິ່ງທີ່ຕົນຮັກເທົ່ານັ້ນ ທີ່ຈະເຮັດໃຫ້ຄົນເຮົາປະສົບຄວາມສຳເລັດ, ແຕ່ການໄດ້ເຮັດໃນສິ່ງທີ່ຕົນເອງມີຈຸດແຂງ ກໍເປັນອີກເສັ້ນທາງໜຶ່ງທີ່ເຮັດໃຫ້ຄົນເຮົາປະສົບຄວາມສຳເລັດໄດ້ຄືກັນ ເຊັ່ນ: ທ່ານ ເອີລ ວູດສ໌ (Earl Woods) ເມື່ອສັງເກດເຫັນ ທ່ານ ໄທເກີ ວູດສ໌ (Tiger Woods) ຜູ້ເປັນລູກຊາຍມີຈຸດແຂງ ໃນກິລາກ໊ອຟ ທ່ານຈຶ່ງສົ່ງເສີມໃຫ້ລູກຊາຍຫຼິ້ນກິລາກ໊ອຟ ຕັ້ງແຕ່ຕອນອາຍຸ 2 ປີ ແທນການຫຼິ້ນກິລາປະເພດອື່ນ, ສຸດທ້າຍ ທ່ານ ໄທເກີ ວູດສ໌ ກໍກາຍເປັນນັກກ໊ອຟມືໜຶ່ງຂອງໂລກ.

ໃນອະດີດ ຄົນເຮົາເຊື່ອວ່າ **"ທຸກຄົນສາມາດຮຽນຮູ້ ໃຫ້ຕົນເອງມີຄວາມສາມາດໃນທຸກໆດ້ານ ແລະ ວິທີທີ່ດີທີ່ສຸດໃນການພັດທະນາຄົນ ກໍຄືການແກ້ໄຂ ແລະ ປັບປຸງດ້ານທີ່ເປັນຈຸດອ່ອນ ໃຫ້ດີຂຶ້ນ"** ເຊິ່ງໝາຍຄວາມວ່າ ເມື່ອຄົນເຮົາຮູ້ວ່າຕົນເອງມີຈຸດອ່ອນດ້ານໃດ ກໍຈະເນັ້ນໜັກໃສ່ການແກ້ໄຂຈຸດອ່ອນດ້ານນັ້ນ, ໂດຍບໍ່ໃຫ້ຄວາມສົນໃຈໃນຈຸດແຂງຂອງຕົນເອງເລີຍ ຍ້ອນຄົນສ່ວນໃຫຍ່ມັກຈະອ້າງເຫດຜົນ ໃນທຳນອງດຽວກັນວ່າ **ມັນແຂງຢູ່ແລ້ວ ຈະຕ້ອງໄປພັດທະນາມັນເຮັດຫຍັງ?** ສຸດທ້າຍ ບຸກຄົນນັ້ນ ກໍຈະກາຍເປັນພຽງແຕ່ຄົນທຳມະດາຄືດັ່ງເພິ່ນວ່າ **"ຖ້າທ່ານພະຍາຍາມເປັນຜູ້ເລີ່ມຕົ້ນ ໃນອາຊີບໃໝ່ໆຢູ່ຕະຫຼອດເວລາແລ້ວ ທ່ານກໍຈະກາຍເປັນພຽງແຕ່ບຸກຄົນຢູ່ໃນລະດັບທີ່ເລີ່ມຕົ້ນຂອງອາຊີບນັ້ນ"** ຫຼື **"The expert in anything was once a beginer"** ເຊິ່ງຄ້າຍຄືກັບການເຮັດ

ຫຼາຍສິ່ງໃນເວລາດຽວກັນ ໂດຍທີ່ບໍ່ກ່ຽວຂ້ອງກັບຈຸດແຂງແລ້ວ ທ່ານກໍຈະກາຍເປັນພຽງແຕ່ບຸກຄົນທຳມະດາທີ່ບໍ່ໄດ້ໂດດເດັ່ນຢູ່ໃນສັງຄົມ ຄ້າຍຄືກັບເປັດທີ່ສາມາດລອຍນ້ຳກໍໄດ້ ແລະ ບິນກໍໄດ້, ແຕ່ບໍ່ເກັ່ງຈັກຢ່າງ, ສ່ວນນົກ ເຖິງວ່າຈະລອຍນ້ຳບໍ່ໄດ້ຄືເປັດ ແຕ່ພວກມັນສາມາດບິນໄດ້ໄວກວ່າເປັດ, ສ່ວນປາເຖິງວ່າຈະບິນບໍ່ໄດ້ຄືດັ່ງເປັດ, ແຕ່ພວກມັນສາມາດລອຍນ້ຳໄດ້ໄວກວ່າເປັດ, ສະນັ້ນທ່ານຄວນເປັນຄືດັ່ງປາ ຫຼື ນົກທີ່ມີຈຸດແຂງສະເພາະດ້ານ ແມ່ນຈະດີກວ່າ.

ແມ່ນຢູ່ວ່າ ຄົນຜູ້ທີ່ມີຄວາມສາມາດໃນຫຼາຍໆດ້ານແມ່ນດີ ຍ້ອນໃນກໍລະນີທີ່ຈຳເປັນ ກໍສາມາດນຳໃຊ້ໄດ້, ແຕ່ຢ່າລືມວ່າ ບໍ່ມີຄົນໃດທີ່ຈະເກັ່ງໄປໝົດທຸກຢ່າງ ໂດຍອີງຕາມການວິໄຈ ໄດ້ໃຫ້ຮູ້ວ່າ ຄົນເຮົາສາມາດເຮັດສິ່ງຕ່າງໆໄດ້ດີ ໃນເວລາດຽວກັນ ໄດ້ພຽງແຕ່ 3 ຢ່າງເທົ່ານັ້ນ ຈຶ່ງເປັນທີ່ມາຂອງ**ກົດເລກ 3** ທີ່ກອງທະຫານທົ່ວໂລກມັກນຳໃຊ້ກົດນີ້ ເຊັ່ນ: 1 ໝວດ ຈະປະກອບມີ 3 ຈຸ ແລະ 1 ຈຸປະກອບມີ 3 ຄົນ ເປັນຕົ້ນ. ແຕ່ເຖິງຢ່າງໃດກໍຕາມ ຄົນຜູ້ທີ່ປະສົບຄວາມສຳເລັດສ່ວນຫຼາຍ ພວກເຂົາຈະມີຄວາມຊ່ຽວຊານສະເພາະດ້ານໜຶ່ງ ຫຼື ສອງດ້ານເທົ່ານັ້ນ, ແຕ່ພວກເຂົາມີຄວາມຊ່ຽວຊານໃນດ້ານນັ້ນແທ້ໆ ຫຼື ທ່ານຄິດວ່າ ຖ້າທ່ານໄທເກີ ວູດສ໌ ມາຫຼິ້ນກິລາບານເຕະ ກໍຈະເກັ່ງເໝືອນດັ່ງ ທ່ານ ເດວິດ ເບັກແຮມ (David Beckham) ຫຼື ທ່ານ ຄຣິສ໌ເຕຍໂນ ໂຣນາລ໌ໂດ (Christiano Ronaldo) ບໍ? ມີຄຳສຸພາສິດຈີນທີ່ວ່າ **"ຄົນທີ່ເກັ່ງທຸກຢ່າງນັ້ນ ກໍຄືຄົນທີ່ບໍ່ເກັ່ງຫຍັງຈັກຢ່າງ, ສ່ວນຄົນທີ່ຮູ້ໄປໝົດທຸກເລື່ອງນັ້ນ ກໍຄືຄົນທີ່ບໍ່ໄດ້ມີຄວາມຊ່ຽວຊານຫຍັງເລີຍ"**.

ທ່ານ ໂກອິຈິ ທານາກະ (Koichi Tanaka) ນັກວິສະວະກຳຊາວຍີ່ປຸ່ນ ທີ່ໄດ້ຮັບລາງວັນໂນເບວ ສາຂາເຄມີສາດ (Nobel Prize in Chemistry) ໃນປີ 2002 ທີ່ເປັນລາງວັນສູງສຸດດ້ານວິທະຍາສາດຂອງໂລກ, ເມື່ອທ່ານຮູ້ຈຸດແຂງຂອງຕົນເອງດີວ່າ ທ່ານເກັ່ງດ້ານການວິໄຈຫຼາຍກວ່າງານບໍລິຫານທົ່ວໄປ, ສະນັ້ນ ທ່ານຈຶ່ງປະຕິເສດການຖືກເລື່ອນຕຳແໜ່ງໃຫ້ສູງຂຶ້ນຢູ່ເລື້ອຍໆ, ຍ້ອນການເປັນຜູ້ບໍລິຫານລະດັບສູງນັ້ນ ຕ້ອງໃຊ້ເວລາໝົດໄປກັບການບໍລິຫານຄົນ, ການປະຊຸມ,

ການຮັບແຂກ... ທ່ານຈຶ່ງປະຕິເສດຕໍາແໜ່ງສູງ ແລະ ຂໍເຮັດວຽກດ້ານການວິໄຈ ທີ່ຕົນມີຈຸດແຂງ ແລະ ມີຄວາມສາມາດ ສຸດທ້າຍ ທ່ານກໍປະສົບຄວາມສໍາເລັດ.

ໃນດ້ານທຸລະກິດກໍເຊັ່ນກັນ ຖ້າບໍ່ຮູ້ຈັກສົ່ງເສີມຈຸດແຂງແລ້ວ ກໍຍາກທີ່ຈະປະສົບຄວາມສໍາເລັດ ເຊັ່ນ: ກຸ່ມບໍລິສັດ ຊໍາຊຸງ (Samsung) ທີ່ກໍ່ຕັ້ງ ບໍລິສັດຜະລິດລົດໃຫຍ່ ໃນປີ 1995 ທັງໆທີ່ຕົນເອງບໍ່ມີຄວາມຊ່ຽວຊານດ້ານການຜະລິດລົດມາກ່ອນເລີຍ, ແຕ່ກໍ່ຕັ້ງ ຍ້ອນທ່ານ ກັນ ຮີ ລີ ປະທານ ບໍລິສັດ ຊໍາຊຸງ ມີຄວາມສົນໃຈທຸລະກິດນີ້, ສຸດທ້າຍ ລົດໃຫຍ່ຍີ່ຫໍ້ຊໍາຊຸງ ກໍບໍ່ສາມາດຄອງຕະຫຼາດໄດ້, ຍ້ອນບໍລິສັດຄູ່ແຂ່ງຫຼັກໆ ເຊັ່ນ: ຮຸນໄດ ແລະ ເກຍ (Hyundai and Kia) ແມ່ນມີຄວາມຊ່ຽວຊານດ້ານການຜະລິດລົດມາຫຼາຍປີແລ້ວ ເຊິ່ງກົງກັນຂ້າມກັບບໍລິສັດ ຊໍາຊຸງ ທີ່ມີຄວາມຊ່ຽວຊານດ້ານການຜະລິດເຄື່ອງໃຊ້ໄຟຟ້າ ເຊັ່ນ: ໂທລະສັບມືຖື ແລະ ໂທລະພາບ. ແນ່ນອນ ບໍລິສັດ ຮຸນໄດ ຫຼື ເກຍ ກໍຄົງບໍ່ສາມາດຜະລິດ ໂທລະສັບ ຫຼື ໂທລະພາບ ແຂ່ງຂັນກັບ ບໍລິສັດ ຊໍາຊຸງໄດ້ ແລະ ບໍລິສັດ ຊໍາຊຸງ ກໍຍາກທີ່ຈະຜະລິດລົດໃຫຍ່ແຂ່ງຂັນກັບພວກເຂົາໄດ້ເຊັ່ນກັນ.

ໃນລະດັບການພັດທະນາປະເທດກໍເຊັ່ນດຽວກັນ, ການພັດທະນາຈຸດແຂງຖືວ່າເປັນຍຸດທະສາດທີ່ດີ ເຊັ່ນ: ປະເທດ ສິງກະໂປ ທີ່ເຄີຍເປັນປະເທດທຸກຍາກມາກ່ອນ, ມີເນື້ອທີ່ປະມານ 1 ສ່ວນ 5 ຂອງນະຄອນຫຼວງວຽງຈັນ ແລະຂາດເຂີນຊັບພະຍາກອນທໍາມະຊາດ, ແຕ່ສິງກະໂປມີຈຸດແຂງຢູ່ທີ່ຄົນ ແລະ ທີ່ຕັ້ງຂອງປະເທດ ທີ່ຕັ້ງຢູ່ລະຫວ່າງກາງການຄົມມະນາຄົມຂົນສົ່ງຂອງໂລກ. ເລີ່ມຕົ້ນຈາກການນໍາໃຊ້ຈຸດແຂງ ໃນທ່າແຮງທີ່ຕົນມີ, ປະເທດສິງກະໂປຈຶ່ງທຸ້ມເທລົງທຶນໃສ່ການກໍ່ສ້າງລະບົບຄົມມະນາຄົມຂົນສົ່ງທາງນໍ້າ ແລະ ທາງອາກາດ ຈົນກາຍເປັນປະເທດທີ່ມີທ່າເຮືອ ແລະ ເດີ່ນບິນທີ່ດີທີ່ສຸດຢູ່ໃນອັນດັບຕົ້ນໆຂອງໂລກ. ທາງດ້ານການພັດທະນາຄົນ, ປະເທດສິງກະໂປ ກໍມີມະຫາວິທະຍາໄລທີ່ດີທີ່ສຸດ ເຊັ່ນ: ມະຫາວິທະຍາໄລແຫ່ງຊາດສິງກະໂປ ເຊິ່ງເປັນມະຫາວິທະຍາໄລທີ່ດີທີ່ສຸດອັນດັບໜຶ່ງໃນທະວີບອາຊີ (ປີ 2014), ຈຶ່ງເຮັດໃຫ້ປະເທດ ສິງກະໂປກາຍເປັນປະເທດທີ່ມີຄວາມຈະເລີນ ແລະ ທັນສະໄໝຢູ່ໃນອັນດັບຕົ້ນຂອງໂລກນັ້ນ

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ